# ຄວາມແຕກຕ່າງ ລະຫວ່າງບົດບາດຍິງ-ຊາຍ ໃນການຄຸ້ມຄອງປ່າໄມ້

## ກອງປະຊຸມປຶກສາຫາລືຂັ້ນບ້ານ





## ການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້





## ການລາດຕາເວນ ແລະ ການປູກປ່າຄືນໃໝ່









Norad

RECOFTC
THE CENTER FOR
PEOPLE AND FORESTS

# ອະທິບາຍເຖິງຄວາມແຕກຕ່າງ ລະຫວ່າງບົດບາດຍິງ-ຊາຍ ໃນການຄຸ້ມຄອງປ່າໄມ້

## ເນື້ອໃນຂອງແຜ່ນໂຄສະນາ:

ການແບ່ງແຍກທາງສັງຄົມລະຫວ່າງຜູ້ຍິງ ແລະ ຜູ້ຊາຍ ໃນການນຳໃຊ້ ແລະຄຸ້ມຄອງປ່າໄມ້ ມັກຈະນຳໄປສູ່ການແບ່ງປັນຜົນປະໂຫຍດທີ່ບໍ່ເປັນທຳຈາກການນຳໃຊ້ ແລະ ຄຸ້ມຄອງປ່າໄມ້ໄດ້.

## ຄຳອະທິບາຍກ່ຽວກັບແຜ່ນໂຄສະນາ:

ຄວາມແຕກຕ່າງລະຫວ່າງຜູ້ຊາຍ ແລະ ຜູ້ຍິງໃນຊຸມຊົນນະບົດໃນການນຳໃຊ້ ແລະ ຄວາມຮູ້ກ່ຽວກັບຊັບພະຍາກອນປ່າໄມ້ມັກຈະນຳໄປສູ່ການກຳນົດສະພາບເສດຖະກິດສັງຄົມ ໃນສັງຄົມ, ສ່ວນໃຫຍ່ຜູ້ຊາຍ ຈະເປັນຜູ້ຮັບຜິດຊອບບວຽກດ້ານເຕັກນິກ, ສ່ວນຜູ້ຍິງ ຈະເປັນຜູ້ຊ່ວຍ ແລະ ມີຄວາມສຳຄັນນ້ອຍກວ່າ, ສ່ວນໃຫຍ່ຜູ້ຊາຍ ຈະເປັນຜູ້ຕັດສິນໃຈໃນອົງການຈັດຕັ້ງໃນກຸ່ມຊຸມຊົນ ສ່ວນຜູ້ຍິງ ຈະບໍ່ໄດ້ເປັນຕົວແທນວຽກດັ່ງກ່າວ ຍ້ອນມີໂອກາດຕໍ່ສິ່ງອຳນວຍຂໍ້ສະດວກໃນການປະຕິບັດວຽກງານ, ໃນວຽກງານດ້ານສັງຄົມ ແລະ ວັດທະນະທຳ ທີ່ຈຳກັດ. ຍົກຕົວຢ່າງ: ຖ້າມີກອງປະຊຸມບ້ານ ຫລື ມີກອງປະຊຸມປຶກສາຫາລືຂັ້ນບ້ານ ຜູ້ຊາຍ ມັກຈະຄອບງຳຂະບວນການທັງໝົດ, ມີຄວາມໝັ້ນໃຈຫລາຍກວ່າໃນການສະເໜີຄວາມຄິດເຫັນ ແລະ ມີອຳນາດໃນການຕັດສິນໃຈ ຫຼາຍກວ່າຜູ້ຍິງ. ໃນຂະບວນການວາງແຜນ ພັດທະນາຊຸມຊົນຕ່າງໆ ເຊັ່ນ: ການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ຜູ້ຊາຍ ຈະຈັດຕັ້ງ ຫຼື ຮັບຜິດຊອບຫລາຍກວ່າຜູ້ຍິງ, ຕົວຢ່າງ ຜູ້ຍິງສ່ວນຫລາຍໃນຊົນນະບົດ ບໍ່ຮູ້ໜັງສື ແລະ ບໍ່ໄດ້ຮັບການສຶກສາ ເພາະສະນັ້ນ ຜູ້ຍິງສ່ວນຫລາຍມັກຈະໜ້າອາຍ ແລະ ບໍ່ກ້າສະແດງຄວາມຄິດເຫັນ ຕໍ່ໜ້າມະຫາຊົນ ແລະ ຕໍ່ເຈົ້າໜ້າທີ່ປ່າໄມ້ ເຊິ່ງເປັນເຫດໃຫ້ຜູ້ຊາຍມີໂອກາດ ຫລື ໄດ້ຮັບການເອົາໃຈໃສ່ຈາກເຈົ້າໜ້າທີ່ປ່າໄມ້ ໃຫ້ເຂົ້າຮ່ວມໃນຂະບວນການວາງແຜນຫລາຍກວ່າຜູ້ຍິງ. ໃນບັນດາກິດ ຈະກຳກ່ຽວກັບການຄຸ້ມຄອງປ່າໄມ້ ເຊັ່ນ: ການປູກປ່າຄືນໃໝ່ ແລະການລາດຕາເວນ, ຜູ້ຍິງ ຈະໄດ້ຮັບມອບໝາຍໜ້າທີ່ພຽງເລັກນ້ອຍເທົ່ານັ້ນ, ແຕ່ວ່າຜູ້ຍິງ ມີຄວາມຮູ້ຫລາຍ ດ້ານຕົ້ນໄມ້ ແລະ ປ່າໄມ້ ໃນດ້ານຄວາມຫລາກຫລາຍຂອງຊະນິດພັນ (ເບິ່ງແຜ່ນໂຄສະນາທີ 1), ການຄຸ້ມຄອງ ແລະ ການນຳໃຊ້ປ່າໄມ້ ເພື່ອຫຼາຍໆຈຸດປະສົງ ລວມທັງການອະນຸລັກຮັກສາ. ສິ່ງເຫລົ່ານີ້ ເປັນເຫດໃຫ້ເກີດການແບ່ງປັນຜົນປະໂຫຍດທີ່ບໍ່ເປັນທຳ ແກ່ກຸ່ມຜູ້ຍິງໃນຊົນນະບົດ ຈາກການຄຸ້ມຄອງປ່າໄມ້ ແລະ ເປົ້າໝາຍການຄຸ້ມຄອງປ່າໄມ້ແບບຍືນຍົງ ຈະເຮັດບໍ່ໄດ້ດີເທົ່າທີ່ຄວນ.

## ປະເດັນສຳຄັນ ທີ່ຜູ້ອຳນວຍຄວາມສະດວກ ຄວນຈະນຳໄປຖ່າຍທອດ:

- ຜູ້ຊາຍ ມັກເປັນຜູ້ນຳຄອບຄົວ, ຜູ້ນຳຊຸມຊົນ ແລະ ມີອິດທິພົນໃນການຕັດສິນໃຈ ແລະ ມັກຖືກເລືອກໃຫ້ເຂົ້າຮ່ວມໃນການຕັດສິນໃຈບັນຫາສຳຄັນ ທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້
- ເຖິງແມ່ນວ່າຜູ້ຍິງ ຈະມີຄວາມເຂົ້າໃຈ ແລະ ຮູ້ກ່ຽວກັບຜົນຜະລິດປ່າໄມ້ຕ່າງໆ ເຖິງຈະບໍ່ຫຼາຍກວ່າຜູ້ຊາຍ ແຕ່ຢ່າງນ້ອຍກໍ່ທຽບເທົ່າຜູ້ຊາຍ, ແຕ່ຄວາມຄິດເຫັນຂອງເຂົາເຈົ້າໃນຂະບວນການຕັດສິນໃຈ ໂດຍລວມແລ້ວ ບໍ່ໄດ້ຮັບການເອົາໃຈໃສ່.
- ສາຍເຫດສ່ວນໜຶ່ງ ແມ່ນມາຈາກຄວາມຮູ້ສຶກຈາກສັງຄົມ ທີ່ກຳນົດວ່າຜູ້ຍິງມີຄວາມຮູ້ ແລະ ຄວາມເຂົ້າໃຈນ້ອຍໃນດ້ານການຄຸ້ມຄອງປ່າໄມ້ ແລະ ອີກສ່ວນໜຶ່ງ ແມ່ນຍ້ອນວ່າແມ່ຍິງ ບໍ່ມີເວລາເຂົ້າຮ່ວມເຄື່ອນໄຫວກິດຈະກຳ ເນື່ອງຈາກຜູ້ຍິງຕ້ອງຮັບຜິດຊອບລູກເຕົ້າໃນຄອບຄົວ ແລະ ມີຄວາມຮູ້ນ້ອຍໃນດ້ານການຄຸ້ມຄອງປ່າໄມ້.
- ຍ້ອນຂາດການເອົາໃຈໃສ່ ແລະ ບໍ່ເຫັນໄດ້ເຖິງຄວາມສຳຄັນຂອງແມ່ຍິງໃນຂະບວນການຕັດສິນໃຈດັ່ງກ່າວ, ການແບ່ງປັນຜົນປະໂຫຍດຈາກປ່າໄມ້ ໂດຍລວມແລ້ວ ຜູ້ຊາຍ ແມ່ນໄດ້ປຽບ.

**ໝາຍເຫດ:**

*ເນື້ອໃນແຜ່ນໂຄສະນາ ເປັນພຽງຂໍ້ແນະນຳສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານເທົ່ານັ້ນ. ເພື່ອນຳໃຊ້ແຜ່ນໂຄສະນານີ້ໃນການຝຶກອົບຮົມຂັ້ນຮາກຖານ, ຜູ້ອຳນວຍຄວາມສະດວກ ສາມາດປັບໃຊ້ໄດ້ຕາມສະຖານະການຕົວຈິງໃນທ້ອງຖິ່ນ.*

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມ ໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

ການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ

ສະຫງວນລິຂະສິດ © ອົງການ RECOFTC ເດືອນຕຸລາ 2015

ບາງກອກ ປະເທດ ໄທ

ແຕ້ມໂດຍ: ທ່ານນາງ ຈູທາມາສ ປຣະມູນມາກ

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ສຳລັບຂໍ້ມູນລາຍລະອຽດ, ກະລຸນາຕິດຕໍ່
ອົງການ RECOFTC ປະຈຳ ສປປ ລາວ
ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
ໝາຍເລກໂທລະສັບ: 856 21 219512 ເວັບໄຊທ: www.recoftc.org

Norad

THE CENTER FOR PEOPLE AND FORESTS